## ປະກາດແຈ້ງການ

### ຫ້າມຊື້, ຂາຍ, ຫຼື ອະນຸຍາດໃຫ້ບຸກຄົນອື່ນໃຊ້ບັນຊີສ່ວນຕົວຂອງທ່ານ

ຮຽນບັນດາລູກຄ້າ ແລະ ຄູ່ຮ່ວມທຸລະກິດທີ່ນັບຖືທຸກທ່ານ,

ທະນາຄານ ອາເຮັສບີ ລາວ ຈຳກັດຜູ້ດຽວ (ທອຮບ) ຂໍແຈ້ງໃຫ້ລູກຄ້າທຸກທ່ານຊາບວ່າ ການຊື້, ຂາຍ ຫຼື ອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ບັນຊີທະນາຄານສ່ວນຕົວຂອງທ່ານ ຫຼື ບຸກຄົນທີສາມແມ່ນເປັນຂໍ້ຫ້າມຢ່າງເຂັ້ມງວດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ຖ້າຫາກພົບວ່າລູກຄ້າມີ:**

- ການຂາຍບັນຊີທະນາຄານຂອງຕົນເອງໃຫ້ບຸກຄົນອື່ນ
- ການຊື້ບັນຊີທະນາຄານຈາກບຸກຄົນອື່ນ
- ການອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ບັນຊີເພື່ອດຳເນີນທຸລະກຳຕ່າງໆ

**ທ່ານຈະຖືກລົງໂທດທາງກົດໝາຍຢ່າງຮ້າຍແຮງ, ລວມທັງມາດຕະການຕ່າງໆດັ່ງນີ້:**

- ປັບໃໝເປັນເງິນ 900,000,000 ກີບ (ເກົ້າຮ້ອຍລ້ານກີບ) ຂຶ້ນໄປ
- ຍຶດ ແລະ ອາຍັດຊັບສິນທີ່ກ່ຽວຂ້ອງ
- ຈຳຄຸກສູງສຸດ 15 ປີ

**ລູກຄ້າທຸກຄົນຕ້ອງມີຄວາມຮັບຜິດຊອບຢ່າງເຕັມທີ່ຕໍ່:**

- ການເຮັດທຸລະກຳທັງໝົດທີ່ດຳເນີນຜ່ານບັນຊີທະນາຄານຂອງຕົນເອງ.
- ການປົກປ້ອງຂໍ້ມູນບັນຊີ, ບັດ, ລະຫັດຜ່ານ ແລະ ການເຂົ້າເຖິງຂໍ້ມູນຂອງຕົນເອງ
- ກະລຸນານຳໃຊ້ບັນຊີທະນາຄານຂອງທ່ານ ເພື່ອຈຸດປະສົງທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ.

ຫາກທ່ານລະເມີດ ແລະ ບໍ່ປະຕິບັດຕາມແຈ້ງການສະບັບນີ້ ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍຕ່າງໆ ແລະຈະຖືກດຳເນີນຂະບວນການຕາມກົດໝາຍ.

ສອບຖາມຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ຫາພວກເຮົາທີ່:

- ໂທລະສັບ : +85621 455 117 – 119 , ວັນຈັນ - ວັນສຸກ ເວລາ 8:30 ເຊົ້າ ຫາ 3:30 ແລງ;
- ອີເມວ : RHBLao.customerservice@rhbgroup.com;

ຂອບໃຈສຳລັບການຮ່ວມມືຂອງທ່ານ.

ດ້ວຍຄວາມນັບຖື
ທະນາຄານ ອາເຮັສບີ ລາວ ຈຳກັດຜູ້ດຽວ.